ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----====000====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 0053/ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 17 OCT 2019

# ຂໍ້ຕົກລົງ
## ວ່າດ້ວຍການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດບໍລິຫານຊັບສິນ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 195/ນຍ, ລົງວັນທີ 12 ມິຖຸນາ 2017;
- ອີງຕາມໜັງສືສະເໜີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 0027/ສຄຄຊ ລົງວັນທີ 25 ກັນຍາ 2019.

## ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດບໍລິຫານຊັບສິນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຂອງບໍລິສັດ ແນໃສ່ສົ່ງເສີມໃຫ້ວຽກງານດັ່ງກ່າວ ເຄື່ອນໄຫວຢ່າງມີ ປະສິດທິພາບ, ໝັ້ນຄົງ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 ບໍລິສັດບໍລິຫານຊັບສິນ**

ບໍລິສັດບໍລິຫານຊັບສິນ ແມ່ນສະຖາບັນການເງິນ ທີ່ດຳເນີນທຸລະກິດໃນການສ້າງຕັ້ງ ແລະ ບໍລິຫານກອງທຶນຮ່ວມ ພ້ອມທັງບໍລິຫານຊັບສິນທີ່ເປັນເງິນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ ເພື່ອລົງທຶນໃນ ຕະຫຼາດເງິນ ຫຼື ຕະຫຼາດທຶນ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບໍລິສັດບໍລິຫານຊັບສິນ ລວມທັງ ສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ຄະນະພະແນກ, ນັກວິຊາຊີບທຸລະກິດຫຼັກຊັບ, ພະນັກງານ ຂອງຫົວໜ່ວຍດັ່ງກ່າວ, ບຸກຄົນ,

ນິຕິບຸກຄົນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງກັບເຄື່ອນໄຫວທຸລະກິດຂອງ ບໍລິສັດບໍລິຫານຊັບສິນ ຢູ່ ສປປ ລາວ.

## ໝວດທີ 2
## ການຂໍອະນຸຍາດເຄື່ອນໄຫວທຸລະກິດບໍລິຫານກອງທຶນຮ່ວມ

**ມາດຕາ 4 ເງື່ອນໄຂການຂໍອະນຸຍາດເຄື່ອນໄຫວທຸລະກິດ**

ຜູ້ທີ່ມີຈຸດປະສົງຂໍອະນຸຍາດເຄື່ອນໄຫວທຸລະກິດບໍລິຫານກອງທຶນຮ່ວມ ຕ້ອງຂໍອະນຸຍາດຈາກ ສຄຄຊ ຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 51 ແລະ ມາດຕາ 74 ແລະ ມີເງື່ອນໄຂ ເພີ່ມເຕີມ ດັ່ງນີ້:

1. ເປັນ ບຸກຄົນ, ບໍລິສັດຫຼັກຊັບ, ທະນາຄານທຸລະກິດ, ບໍລິສັດປະກັນໄພ ພາຍໃນ ຫຼື ຕ່າງປະເທດ, ບໍລິສັດບໍລິຫານຊັບສິນຕ່າງປະເທດ ແລະ ນິຕິບຸກຄົນອື່ນ ຕາມການພິຈາລະນາຂອງ ສຄຄຊ ທີ່ສ້າງຕັ້ງເປັນ ບໍລິສັດບໍລິຫານຊັບສິນ ຕາມກົດໝາຍວ່າດ້ວຍວິສາຫະກິດ;
2. ມີທຶນຈົດທະບຽນ ຢ່າງໜ້ອຍ ສິບຕື້ກີບ;
3. ມີລະບົບ ຄວບຄຸມພາຍໃນ, ການບໍລິຫານຄວາມສ່ຽງ, ເຕັກໂນໂລຢີຂໍ້ມູນ ຂ່າວສານ ແລະ ການປ້ອງກັນຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດພາຍໃນ ບໍລິສັດ, ບໍລິສັດ ກັບ ບຸກຄົນ ຫຼື ນິຕິບຸກຄົນອື່ນທີ່ກ່ຽວຂ້ອງ;
4. ຂາຮຸ້ນທີ່ຂໍສ້າງຕັ້ງເປັນ ບໍລິສັດບໍລິຫານຊັບສິນ ຕ້ອງມີຖານະການເງິນດີ ແລະ ໄດ້ຮັບການກວດສອບຈາກບໍລິສັດກວດສອບພາຍນອກ;
5. ມີເງື່ອນໄຂອື່ນ ຕາມທີ່ໄດ້ກໍານົດຂອງ ສຄຄຊ.

**ມາດຕາ 5 ເອກະສານປະກອບການຂໍອະນຸຍາດເຄື່ອນໄຫວທຸລະກິດ**

ບໍລິສັດບໍລິຫານຊັບສິນ ທີ່ມີຈຸດປະສົງຂໍອະນຸຍາດເຄື່ອນໄຫວທຸລະກິດບໍລິຫານບໍລິຫານຊັບສິນ ຕ້ອງປະກອບເອກະສານ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 52 ແລະ ມີເອກະສານຢັ້ງຢືນການປະກອບທຶນຈົດທະບຽນ.

**ມາດຕາ 6 ອັດຕາສ່ວນການຖືຮຸ້ນ**

ບຸກຄົນ ແລະ ນິຕິບຸກຄົນ ສາມາດເປັນຜູ້ຖືຮຸ້ນສ້າງຕັ້ງບໍລິສັດບໍລິຫານຊັບສິນ ຕາມອັດຕາສ່ວນ ດັ່ງນີ້:

1. ບຸກຄົນສາມາດຖືຮຸ້ນບໍ່ເກີນ ສິບສ່ວນຮ້ອຍ ຂອງທຶນຈົດທະບຽນທັງໝົດ;
2. ບໍລິສັດຫຼັກຊັບ, ທະນາຄານທຸລະກິດ, ບໍລິສັດປະກັນໄພ ພາຍໃນ ແລະ ຕ່າງປະເທດ ຕ້ອງຖືຮຸ້ນຢ່າງໜ້ອຍ ເຈັດສິບສ່ວນຮ້ອຍ ຂອງທຶນຈົດທະບຽນທັງໝົດ;
3. ບໍລິສັດບໍລິຫານຊັບສິນຕ່າງປະເທດ ສາມາດຖືຮຸ້ນສ້າງຕັ້ງຮ່ວມກັນໄດ້ ຮ້ອຍສ່ວນຮ້ອຍ ຂອງທຶນຈົດທະບຽນທັງໝົດ.

**ມາດຕາ 7 ການພິຈາລະນາການຂໍອະນຸຍາດເຄື່ອນໄຫວທຸລະກິດ**

ສຄຄຊ ຕ້ອງພິຈາລະນາ ການຂໍອະນຸຍາດເຄື່ອນໄຫວທຸລະກິດບໍລິຫານກອງທຶນຮ່ວມ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີປະຕິເສດຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາຫາກເຫັນວ່າມີຄວາມຈຳເປັນ ສຄຄຊ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາໃຫ້ຂໍ້ມູນ.

ພາຍຫຼັງໄດ້ຮັບໃບອະນຸຍາດເຄື່ອນໄຫວທຸລະກິດຈາກ ສຄຄຊ ແລ້ວ ບໍລິສັດບໍລິຫານຊັບສິນ ຕ້ອງປະກາດໃຫ້ມວນຊົນຊາບ ຜ່ານພາຫະນະສື່ມວນຊົນ ພາຍໃນກຳນົດເວລາ ຫ້າວັນ ນັບແຕ່ວັນໄດ້ຮັບໃບອະນຸຍາດ ເຄື່ອນໄຫວທຸລະກິດເປັນຕົ້ນໄປ.

**ມາດຕາ 8 ຂອບເຂດການເຄື່ອນໄຫວທຸລະກິດ**

ບໍລິສັດບໍລິຫານຊັບສິນ ສາມາດເຄື່ອນໄຫວທຸລະກິດ ດັ່ງນີ້:

1. ສ້າງຕັ້ງກອງທຶນຮ່ວມ;
2. ບໍລິຫານກອງທຶນຮ່ວມ;
3. ບໍລິຫານຊັບສິນທີ່ເປັນເງິນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ;
4. ເຄື່ອນໄຫວທຸລະກິດອື່ນ ຕາມການກຳນົດຂອງ ສຄຄຊ.

**ມາດຕາ 9 ສິດ ແລະ ໜ້າທີ່ ຂອງບໍລິສັດບໍລິຫານຊັບສິນ**

ບໍລິສັດບໍລິຫານຊັບສິນ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 76. ນອກຈາກນັ້ນ, ຍັງມີສິດ ແລະ ໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ລາຍງານຜົນການຂາຍໜ່ວຍລົງທຶນຂອງກອງທຶນຮ່ວມ ແລະ ສະເໜີຂໍຂຶ້ນທະບຽນເງິນທີ່ໄດ້ຈາກການຂາຍໜ່ວຍລົງທຶນນຳ ສຄຄຊ;
2. ຂຶ້ນທະບຽນ ແລະ ຮັບຝາກ ໜ່ວຍລົງທຶນທີ່ບໍ່ຈົດທະບຽນໃນຕະຫຼາດຫຼັກຊັບ;
3. ຄິດໄລ່ມູນຄ່າຊັບສິນສຸດທິຂອງກອງທຶນຮ່ວມໃນແຕ່ລະກອງ;
4. ປະຕິບັດຕາມມາດຕະຖານກ່ຽວກັບ ກົດຈັນຍາບັນໃນການຄຸ້ມຄອງບໍລິຫານ ຂອງບໍລິສັດບໍລິຫານຊັບສິນ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 10 ການຖອກທຶນຈົດທະບຽນ**

ຜູ້ທີ່ມີຈຸດປະສົງຂໍອະນຸຍາດເຄື່ອນໄຫວທຸລະກິດບໍລິຫານກອງທຶນຮ່ວມ ຕ້ອງຖອກທຶນຈົດທະບຽນໃຫ້ຄົບຖ້ວນ ເຂົ້າບັນຊີເງິນຝາກຂອງຕົນ ທີ່ເປີດໄວ້ກັບທະນາຄານທຸລະກິດ ຢູ່ ສປປ ລາວ.

ທຶນຈົດທະບຽນ ສາມາດນຳໃຊ້ເພື່ອກະກຽມ ແລະ ເຄື່ອນໄຫວທຸລະກິດ ແລະ ຕ້ອງລາຍງານການນຳໃຊ້ທຶນດັ່ງກ່າວໃຫ້ ສຄຄຊ ຊາບ ເປັນແຕ່ລະໄລຍະ.

**ມາດຕາ 11 ຄ່າບໍລິການ**

ຜູ້ທີ່ສະເໜີຂໍອະນຸຍາດເຄື່ອນໄຫວທຸລະກິດບໍລິຫານຊັບສິນ ຕ້ອງເສຍຄ່າບໍລິການໃຫ້ ສຄຄຊ ຢ່າງຄົບຖ້ວນ. ລາຍລະອຽດຂອງຄ່າບໍລິການມີ ດັ່ງນີ້:

1. ຄ່າໃບອະນຸຍາດເຄື່ອນໄຫວທຸລະກິດ ຈຳນວນ 10.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຮັບໃບອະນຸຍາດ;
2. ຄ່າຄຸ້ມຄອງປະຈຳປີ ຈຳນວນ 5.000.000 ກີບ ແລະ ຕ້ອງຊຳລະພາຍໃນໄຕມາດທີໜຶ່ງຂອງປີຖັດໄປ ໂດຍຄິດໄລ່ນັບແຕ່ປີສ້າງຕັ້ງເປັນຕົ້ນໄປ ຍົກເວັ້ນບໍລິສັດບໍລິຫານຊັບສິນ ທີ່ໄດ້ຮັບໃບອະນຸຍາດໃຫ້ເຄື່ອນໄຫວທຸລະກິດບໍລິຫານຊັບສິນ ໃນໄລຍະ ຫົກເດືອນ ທ້າຍປີ.

**ມາດຕາ 12 ການປ່ຽນແປງລາຍການຂອງບໍລິສັດບໍລິຫານຊັບສິນ**

ບໍລິສັດບໍລິຫານຊັບສິນ ສາມາດປ່ຽນແປງລາຍການໃດໜຶ່ງໄດ້ ກໍຕໍ່ເມື່ອໄດ້ຮັບອະນຸຍາດຈາກ ສຄຄຊ. ການປ່ຽນແປງລາຍການ ທີ່ຕ້ອງໄດ້ຮັບອະນຸຍາດມີ ດັ່ງນີ້:

1. ການເພີ່ມ ຫຼື ຫຼຸດ ທຶນຈົດທະບຽນ;
2. ຊື່, ສະຖານທີ່ຕັ້ງ, ການຄວບ ຫຼື ການຍຸບເລີກ ບໍລິສັດ;
3. ການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຍົກເວັ້ນ ການໂຈະເນື່ອງຈາກມີການລະເມີດລະບຽບກົດໝາຍ;
4. ການປ່ຽນແປງໂຄງປະກອບຜູ້ຖືຮຸ້ນ;
5. ການປ່ຽນແປງ ສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ຄະນະກຳມະການກວດກາພາຍໃນ ແລະ ຄະນະກຳມະການຕິດຕາມກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍ;
6. ການປ່ຽນແປງອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຄຄຊ ຈະພິຈາລະນາການຂໍປ່ຽນແປງລາຍການ ຕາມທີ່ໄດ້ກຳນົດໄວ້ໃນ ວັກສອງ ຂອງມາດຕານີ້ ພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງຂໍປ່ຽນແປງ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

**ມາດຕາ 13 ການໂຈະການດຳເນີນທຸລະກິດຂອງບໍລິສັດບໍລິຫານຊັບສິນ**

ບໍລິສັດບໍລິຫານຊັບສິນ ຈະຖືກໂຈະການເຄື່ອນໄຫວທຸລະກິດ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວທຸລະກິດ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ;
2. ປະຕິບັດເກີນ ຫຼື ບໍ່ປະຕິບັດ ສິດ ແລະ ໜ້າທີ່ຂອງຕົນ ໃດໜຶ່ງ ຫຼື ທັງໝົດ ທີ່ບໍ່ສອດຄ່ອງຕາມລະບຽບການທີ່ກ່ຽວຂ້ອງ;
3. ມີຄຳສັ່ງຈາກອົງການທີ່ມີສິດອຳນາດກ່ຽວຂ້ອງໃຫ້ໂຈະການດຳເນີນທຸລະກິດ;
4. ຜູ້ບໍລິຫານ ຖືກດຳເນີນຄະດີ ຫຼື ຖືກຮ້ອງຟ້ອງ ກ່ຽວກັບການເຄື່ອນໄຫວທຸລະກິດບໍລິຫານກອງທຶນຮ່ວມ;
5. ບໍ່ປະຕິບັດພັນທະເສຍອາກອນ ແລະ ຄ່າທຳນຽມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;
6. ກໍລະນີອື່ນ ຕາມການກຳນົດຂອງ ສຄຄຊ.

ພາຍຫຼັງຖືກໂຈະການເຄື່ອນໄຫວທຸລະກິດແລ້ວ ຕ້ອງປັບປຸງແກ້ໄຂຕາມກຳນົດເວລາທີ່ ສຄຄຊ ກຳນົດ.

**ມາດຕາ 14 ການຖອນໃບອະນຸຍາດເຄື່ອນໄຫວທຸລະກິດຂອງບໍລິສັດບໍລິຫານຊັບສິນ**

ບໍລິສັດບໍລິຫານຊັບສິນ ຈະຖືກຖອນໃບອະນຸຍາດເຄື່ອນໄຫວທຸລະກິດ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ຕາມການຮ້ອງຂໍຂອງບໍລິສັດ ໂດຍອີງໃສ່ມະຕິຂອງກອງປະຊຸມຜູ້ຖືຮຸ້ນ;

2. ໄດ້ຮັບການອະນຸຍາດເຄື່ອນໄຫວທຸລະກິດ ບົນພື້ນຖານການສະໜອງຂໍ້ມູນບໍ່ຖືກຕ້ອງ ທີ່ສ້າງຜົນເສຍຫາຍຮ້າຍແຮງ ຕໍ່ຄວາມໝັ້ນຄົງຂອງບໍລິສັດ ແລະ ລະບົບຕະຫຼາດທຶນ;
3. ມີການຄວບບໍລິສັດເຂົ້າກັນ;
4. ບໍ່ສາມາດປະຕິບັດຕາມລະບຽບການ ກ່ຽວກັບການຮັກສາຄວາມໝັ້ນຄົງຂອງບໍລິສັດ ຕາມການກຳນົດຂອງ ສຄຄຊ;
5. ບໍ່ສາມາດແກ້ໄຂບັນຫາ ຕາມສາເຫດຂອງການສັ່ງໂຈະການເຄື່ອນໄຫວທຸລະກິດ;
6. ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ສົ່ງຜົນສະທ້ອນຮ້າຍແຮງ ຕໍ່ລະບົບຕະຫຼາດທຶນ ຕາມການພິຈາລະນາຂອງ ສຄຄຊ;
7. ມີຄຳຕັດສິນ ຫຼື ຄຳພິພາກສາ ຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດໃຫ້ ບໍລິສັດລົ້ມລະລາຍ;
8. ກໍລະນີອື່ນ ຕາມການກຳນົດຂອງ ສຄຄຊ.

ພາຍຫຼັງທີ່ຖືກຖອນໃບອະນຸຍາດເຄື່ອນໄຫວທຸລະກິດແລ້ວ ສຄຄຊ ຕ້ອງແຈ້ງໃຫ້ພາກສ່ວນກ່ຽວຂ້ອງ ແລະ ປະກາດໃຫ້ມວນຊົນຊາບຢ່າງກວ້າງຂວາງ ໂດຍຜ່ານພາຫະນະສື່ມວນຊົນເປັນເວລາ ເຈັດວັນ ຢ່າງຕໍ່ເນື່ອງນັບແຕ່ວັນໄດ້ຖືກຖອນໃບອະນຸຍາດເຄື່ອນໄຫວທຸລະກິດ ເປັນຕົ້ນໄປ.

**ມາດຕາ 15 ການປະຕິບັດພາຍຫຼັງຖືກຖອນໃບອະນຸຍາດເຄື່ອນໄຫວທຸລະກິດ**

ບໍລິສັດບໍລິຫານຊັບສິນ ທີ່ຖືກຖອນໃບອະນຸຍາດເຄື່ອນໄຫວທຸລະກິດ ຕ້ອງໂອນບັນຊີລາຍຊື່ລູກຄ້າ, ບັນຊີເງິນ, ບັນຊີຫຼັກຊັບ, ຫຼັກຊັບຄໍ້າປະກັນ ແລະ ອື່ນໆ ຂອງລູກຄ້າ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ໄປໃຫ້ບໍລິສັດບໍລິຫານຊັບສິນອື່ນໃນທັນທີເພື່ອສືບຕໍ່ໃຫ້ບໍລິການ ຕາມການເຫັນດີຂອງ ສຄຄຊ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງຂອງບໍລິສັດບໍລິຫານຊັບສິນ

**ມາດຕາ 16 ໂຄງປະກອບການຈັດຕັ້ງ**

ໂຄງປະກອບການຈັດຕັ້ງຂອງບໍລິສັດບໍລິຫານຊັບສິນ ມີໂຄງປະກອບການຈັດຕັ້ງ ດັ່ງນີ້.

1. ກອງປະຊຸມຜູ້ຖືຮຸ້ນ;
2. ສະພາບໍລິຫານ;
3. ຄະນະກຳມະການສະເພາະດ້ານໃດໜຶ່ງຂອງສະພາບໍລິຫານ;
4. ຄະນະອຳນວຍການ;
5. ຄະນະພະແນກ.

**ມາດຕາ 17 ກອງປະຊຸມຜູ້ຖືຮຸ້ນ**

ກອງປະຊຸມຜູ້ຖືຮຸ້ນ ແມ່ນການຈັດຕັ້ງສູງສຸດຂອງບໍລິສັດບໍລິຫານຊັບສິນ. ກອງປະຊຸມຜູ້ຖືຮຸ້ນ ມີສອງປະເພດ ຄື: ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

ການແຈ້ງກ່ຽວກັບ ກອງປະຊຸມ, ອົງປະຊຸມ, ວາລະກອງປະຊຸມ, ວິທີລົງມະຕິ, ມະຕິກອງປະຊຸມການປ່ຽນແປງ ແລະ ການລົບລ້າງມະຕິກອງປະຊຸມ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍວິສາຫະກິດ. ກອງປະຊຸມສາມັນຂອງຜູ້ຖືຮຸ້ນ ຕ້ອງເປີດຂຶ້ນຢ່າງໜ້ອຍ ໜຶ່ງຄັ້ງ ຕໍ່ປີ ພາຍຫຼັງສຳເລັດການກວດ

ສອບຈາກ ບໍລິສັດກວດສອບພາຍນອກ. ກອງປະຊຸມວິສາມັນ ສາມາດເປີດຂຶ້ນເວລາໃດກໍ່ໄດ້ ຖ້າວ່າມີຄວາມຈໍາເປັນ.

**ມາດຕາ 18 ສິດ ແລະ ໜ້າທີ່ຂອງກອງປະຊຸມຜູ້ຖືຮຸ້ນ**

ກອງປະຊຸມຜູ້ຖືຮຸ້ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງເອົາ ກົດລະບຽບ ແລະ ສັນຍາສ້າງຕັ້ງ ບໍລິສັດບໍລິຫານຊັບສິນ ຕາມການສະເໜີ ຂອງສະພາບໍລິຫານ;
2. ເລືອກຕັ້ງ ຫຼື ປົດຕໍາແໜ່ງ ປະທານ, ຮອງປະທານ, ສະມາຊິກ ສະພາບໍລິຫານ ກ່ອນສະເໜີຕໍ່ ສຄຄຊ ພິຈາລະນາ;
3. ຮັບຮອງເອົາ ບໍລິສັດກວດສອບພາຍນອກ ເພື່ອມາກວດສອບບໍລິສັດຕົນ ຕາມການສະເໜີ ຂອງສະພາບໍລິຫານ;
4. ຮັບຮອງເອົາ ຄະນະອໍານວຍການ ຕາມການສະເໜີຂອງສະພາບໍລິຫານ;
5. ຕົກລົງ ເບ້ຍປະຈໍາປີ, ເບ້ຍປະຊຸມ, ເງິນເດືອນ ຫຼື ນະໂຍບາຍຕ່າງໆ ສໍາລັບ ສະມາຊິກສະພາບໍລິຫານ, ຄະນະອໍານວຍການ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພະນັກງານ;
6. ຮັບຮອງເອົາ ບົດສະຫຼຸບ, ແຜນການດໍາເນີນທຸລະກິດ ແລະ ບົດລາຍງານຜົນການກວດສອບປະຈໍາປີ ຕາມການສະເໜີຂອງສະພາບໍລິຫານ;
7. ຮັບຮອງເອົາການເພີ່ມ ຫຼື ຫຼຸດທຶນຈົດທະບຽນ ຕາມການສະເໜີຂອງສະພາບໍລິຫານ;
8. ຮັບຮອງເອົາ ການຄວບທຸລະກິດ, ການສ້າງຕັ້ງບໍລິສັດໃນກຸ່ມ, ການລົງທຶນ, ການຂາຍຊັບສິນ ຫຼື ການຍຸບເລີກບໍລິສັດບໍລິຫານຊັບສິນ ຕາມການສະເໜີ ຂອງສະພາບໍລິຫານ;
9. ຮັບຮອງເອົາ ການສະເໜີແບ່ງເງິນປັນຜົນ ແລະ ການສ້າງຄັງຕ່າງໆ ຕາມການສະເໜີ ຂອງສະພາບໍລິຫານ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 19 ສະພາບໍລິຫານ**

ສະພາບໍລິຫານຂອງບໍລິສັດບໍລິຫານຊັບສິນ ປະກອບດ້ວຍສະມາຊິກແຕ່ ສາມຄົນ ຂຶ້ນໄປ, ໃນນັ້ນຕ້ອງມີສະມາຊິກອິດສະລະຢ່າງໜ້ອຍ ໜຶ່ງຄົນ ທີ່ບໍ່ມີສ່ວນພົວພັນກັບຜົນປະໂຫຍດຂອງບໍລິສັດ, ບໍ່ແມ່ນພະນັກງານ ຫຼື ເປັນຜູ້ດໍາລົງຕໍາແໜ່ງໃດໜຶ່ງພາຍໃນບໍລິສັດບໍລິຫານຊັບສິນ ຊຶ່ງສາມາດປະກອບຄໍາເຫັນຢ່າງເປັນອິດສະລະ.

ສະພາບໍລິຫານ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກໍາມະການ ຊຶ່ງຖືກເລືອກຕັ້ງ ແລະ ປົດຕໍາແໜ່ງໂດຍກອງປະຊຸມຜູ້ຖືຮຸ້ນ. ອາຍຸການຂອງສະມາຊິກສະພາບໍລິຫານ ແມ່ນບໍ່ເກີນ ສອງປີ ແລະ ສາມາດຖືກເລືອກຕັ້ງຄືນໃໝ່ໄດ້.

ສະພາບໍລິຫານ ຕ້ອງເປີດກອງປະຊຸມຢ່າງໜ້ອຍ ສອງຄັ້ງ ຕໍ່ປີ.

**ມາດຕາ 20 ເງື່ອນໄຂຂອງສະມາຊິກສະພາບໍລິຫານ**

ສະມາຊິກສະພາບໍລິຫານ ຂອງບໍລິສັດບໍລິຫານຊັບສິນ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີຄຸນວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ ແລະ ມີປະສົບການທາງດ້ານ ການເງິນ-ການທະນາຄານ, ທຸລະກິດຫຼັກຊັບ ຫຼື ການບໍລິຫານທຸລະກິດ ສາມປີ ຂຶ້ນໄປ;

2. ບໍ່ເຄີຍຖືກປົດຕໍາແໜ່ງຈາກການເປັນຜູ້ບໍລິຫານໃນນິຕິບຸກຄົນອື່ນ, ບໍ່ເຄີຍຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍມາກ່ອນ ແລະ ບໍ່ເປັນຜູ້ບໍລິຫານໃນນິຕິບຸກຄົນ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;
3. ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ເປັນຕົ້ນ ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ ແລະ ບໍ່ເຄີຍກະທໍາຜິດກ່ຽວກັບທຸລະກິດດ້ານຫຼັກຊັບ;
4. ເງື່ອນໄຂອື່ນ ຕາມການກໍານົດຂອງ ສຄຄຊ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງສະພາບໍລິຫານ**

ສະພາບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງເອົາ ລະບຽບການເຄື່ອນໄຫວຂອງບໍລິສັດບໍລິຫານຊັບສິນ ຕາມການສະເໜີຂອງຄະນະອໍານວຍການ;
2. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຄະນະອໍານວຍການ ຕາມການຕົກລົງເຫັນດີຂອງ ກອງປະຊຸມຜູ້ຖືຮຸ້ນ ແລະ ສຄຄຊ;
3. ກໍານົດນະໂຍບາຍ, ທິດທາງແຜນການ, ກົນໄກ ແລະ ລະບຽບຫຼັກການ ເພື່ອຊີ້ນໍາໃຫ້ຄະນະອໍານວຍການ ຈັດຕັ້ງປະຕິບັດ;
4. ຕິດຕາມການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ມະຕິກອງປະຊຸມສະພາບໍລິຫານ ຂອງຄະນະອໍານວຍການ;
5. ເປັນໃຈກາງໃນການ ປະສານງານ ແລະ ດັດປັບການປະຕິບັດວຽກງານຂອງ ຄະນະອໍານວຍການ;
6. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະ ເອກະສານ ທີ່ກ່ຽວຂ້ອງ ພ້ອມທັງຊີ້ແຈງ, ຕອບຄໍາຖາມ ແລະ ໃຫ້ລາຍລະອຽດຂອງບັນຫາຕ່າງໆຕໍ່ ກອງປະຊຸມຜູ້ຖືຮຸ້ນ, ບໍລິສັດກວດສອບ, ຄະນະກວດກາ, ເຈົ້າໜ້າທີ່ສືບສວນ-ສອບສວນຫຼັກຊັບ ແລະ ບຸກຄົນທີ່ອື່ນກ່ຽວຂ້ອງ;
7. ລາຍງານການເຄື່ອນໄຫວ ແລະ ສ້າງແຜນການເຄື່ອນໄຫວທຸລະກິດປະຈໍາປີ ຂອງບໍລິສັດບໍລິຫານຊັບສິນ ຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ;
8. ສະເໜີ ການຄວບທຸລະກິດ, ການສ້າງຕັ້ງບໍລິສັດໃນກຸ່ມ, ການລົງທຶນ, ການຂາຍຊັບສິນ ຫຼື ການຍຸບເລີກບໍລິສັດບໍລິຫານຊັບສິນ ຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ;
9. ຊີ້ນໍາການປະຕິບັດວຽກງານ ຂອງ ຄະນະກໍາມະການສະເພາະດ້ານ ຂອງສະພາບໍລິຫານ;
10. ສະເໜີການ ສ້າງ ແລະ ປັບປຸງ ກົດລະບຽບ ແລະ ສັນຍາສ້າງຕັ້ງ ບໍລິສັດບໍລິຫານຊັບສິນ ຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ;
11. ຄົ້ນຄວ້າກໍານົດເບ້ຍປະຊຸມຂອງກອງປະຊຸມສະພາບໍລິຫານ, ເງິນເດືອນ, ເງິນບໍາເນັດ ແລະ ນະໂຍບາຍຕ່າງໆ ສໍາລັບ ສະມາຊິກສະພາບໍລິຫານ, ຄະນະອໍານວຍການ ແລະ ພະນັກງານ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ;
12. ຄົ້ນຄວ້າການແບ່ງປັນ ລາຍຮັບ, ເງິນປັນຜົນ ແລະ ການສ້າງຄັງຕ່າງໆ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ;
13. ຮັບຜິດຊອບທຸກການເຄື່ອນໄຫວຂອງບໍລິສັດບໍລິຫານຊັບສິນ ລວມທັງ ຜົນເສຍຫາຍຂອງບໍລິສັດບໍລິຫານຊັບສິນ ແລະ ຂອງລູກຄ້າ ທີ່ເກີດຈາກຄວາມຜິດພາດຂອງຕົນ;
14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 22 ຄະນະກຳມະການສະເພາະດ້ານຂອງສະພາບໍລິຫານ**

ຄະນະກຳມະການສະເພາະດ້ານຂອງສະພາບໍລິຫານ ປະກອບດ້ວຍ: ຄະນະກຳມະການກວດກາພາຍໃນ (Internal Audit Committee), ຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ (Compliance Unit Committee) ແລະ ຄະນະກຳມະການອື່ນ ທີ່ເຫັນວ່າມີຄວາມຈຳເປັນ. ແຕ່ລະຄະນະກຳມະການ ຕ້ອງມີສະມາຊິກຢ່າງໜ້ອຍ ສອງຄົນ ຂຶ້ນໄປ ແລະ ໜຶ່ງໃນນັ້ນ ຕ້ອງແມ່ນສະມາຊິກສະພາບໍລິຫານ ແຕ່ບໍ່ແມ່ນຜູ້ດຳລົງຕຳແໜ່ງເປັນຄະນະອຳນວຍການ.

**ມາດຕາ 23 ເງື່ອນໄຂຂອງຄະນະກຳມະການກວດກາພາຍໃນ**

ຄະນະກຳມະການກວດກາພາຍໃນ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີຄຸນວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປໃນສາຂາ ການບັນຊີ, ກວດສອບ, ກົດໝາຍ, ການເງິນ-ການທະນາຄານ ຫຼື ບໍລິຫານທຸລະກິດ;
2. ມີປະສົບການທາງດ້ານ ການບັນຊີ, ກວດສອບ, ກົດໝາຍ, ການເງິນ-ການທະນາຄານ ຫຼື ທຸລະກິດຫຼັກຊັບ ສາມປີ ຂຶ້ນໄປ;
3. ບໍ່ເຄີຍຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍມາກ່ອນ ແລະ ບໍ່ເປັນຜູ້ບໍລິຫານໃນນິຕິບຸກຄົນ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;
4. ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ເປັນຕົ້ນ ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ ແລະ ບໍ່ເຄີຍກະທຳຜິດກ່ຽວກັບທຸລະກິດດ້ານຫຼັກຊັບ;
5. ຮັບຮູ້ ແລະ ເຊື່ອມຊຶມ ບັນດາແຜນທຸລະກິດຂອງບໍລິສັດ ເປັນຕົ້ນ ແຜນປະຈຳອາທິດ, ປະຈຳເດືອນ, ປະຈຳປີ ແລະ ແຜນຍຸດທະສາດ ຂອງບໍລິສັດ;
6. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຄຄຊ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງຄະນະກຳມະການກວດກາພາຍໃນ**

ຄະນະກຳມະການກວດກາພາຍໃນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການກວດກາໃຫ້ສອດຄ່ອງກັບຂອບເຂດສິດ ແລະ ໜ້າທີ່ຂອງຕົນ ທີ່ໄດ້ຮັບມອບໝາຍຈາກສະພາບໍລິຫານ ຊຶ່ງແຜນດັ່ງກ່າວ ຕ້ອງກວມເອົາທຸລະກຳທີ່ສຳຄັນຂອງບໍລິສັດ ແລະ ຕ້ອງໄດ້ຮັບການຮັບຮອງຈາກສະພາບໍລິຫານ;
2. ເຂົ້າຮ່ວມໃນການສ້າງແຜນການເຄື່ອນໄຫວຂອງບໍລິສັດ ເພື່ອຄວາມສະດວກໃນການຕິດຕາມກວດກາ;
3. ຕິດຕາມ ການປະຕິບັດວຽກງານຂອງ ຄະນະອຳນວຍການ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພະນັກງານ ໃຫ້ສອດຄ່ອງກັບແຜນການເຄື່ອນໄຫວທີ່ ກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ໄດ້ຮັບຮອງເອົາ ພ້ອມທັງລາຍງານໃຫ້ສະພາບໍລິຫານຊາບ ຢ່າງເປັນປົກກະຕິ;
4. ເຮັດບົດລາຍງານຜົນການກວດກາປະຈຳປີສົ່ງໃຫ້ ສະພາບໍລິຫານຮັບຮອງ;
5. ປະສານສົມທົບກັບຄະນະກວດສອບພາຍນອກ ໃນການປະຕິບັດໜ້າທີ່ໃນການກວດສອບ;
6. ຕີລາຄາຄຸນນະພາບຂອງບໍລິສັດກວດສອບ, ຄວາມເປັນເອກະລາດ ແລະ ການພົວພັນຂອງຜູ້ກວດສອບ ໂດຍເບິ່ງສາຍພົວພັນຮອບດ້ານ ລະຫວ່າງ ຜູ້ກວດສອບ ກັບ ບໍລິສັດບໍລິຫານຊັບສິນ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງສະພາບໍລິຫານ.

**ມາດຕາ 25 ເງື່ອນໄຂຂອງຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ**

ຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ ນອກຈາກມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 23 ຍົກເວັ້ນ ຂໍ້ຫ້າ ຂອງຂໍ້ຕົກລົງສະບັບນີ້ແລ້ວ ຕ້ອງມີເງື່ອນໄຂເພີ່ມເຕີມ ຄື: ເປັນຜູ້ທີ່ຮັບຮູ້ ແລະ ເຂົ້າໃຈ ບັນດາກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານຫຼັກຊັບ ແລະ ລະບຽບການທັງໝົດ ຂອງບໍລິສັດຕົນ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ**

ຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການກວດກາໃຫ້ສອດຄ່ອງກັບ ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ທີ່ໄດ້ຮັບມອບໝາຍຈາກສະພາບໍລິຫານ ຊຶ່ງແຜນດັ່ງກ່າວ ຕ້ອງໄດ້ຮັບການຮັບຮອງຈາກສະພາບໍລິຫານ;
2. ຕິດຕາມ ແລະ ກວດກາ ການປະຕິບັດວຽກງານຂອງ ຄະນະອຳນວຍການ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພະນັກງານ ເພື່ອລາຍງານຕໍ່ສະພາບໍລິຫານ ຢ່າງເປັນປົກກະຕິ ພ້ອມທັງສະເໜີວິທີການແກ້ໄຂ ເມື່ອພົບເຫັນການປະຕິບັດວຽກງານບໍ່ສອດຄ່ອງກັບລະບຽບກົດໝາຍທີ່ຕິດພັນກັບວຽກງານຫຼັກຊັບ, ກົດລະບຽບພາຍໃນ ແລະ ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
3. ລາຍງານຕໍ່ ສະພາບໍລິຫານ ແລະ ສຄຄຊ ທັນທີ ກໍລະນີພົບເຫັນເຫດການທີ່ອາດກໍ່ໃຫ້ເກີດຜົນກະທົບຕໍ່ບໍລິສັດ ແລະ ຕະຫຼາດທຶນໂດຍລວມ;
4. ເຜີຍແຜ່ຂໍ້ມູນ ແລະ ໃຫ້ຄຳປຶກສາແກ່ພາກສ່ວນຕ່າງໆໃນບໍລິສັດ ກ່ຽວກັບການປະຕິບັດວຽກງານເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍທີ່ຕິດພັນກັບວຽກງານຫຼັກຊັບ, ກົດລະບຽບພາຍໃນ ແລະລະບຽບການອື່ນຂອງບໍລິສັດ;
5. ສັງລວມຂໍ້ມູນກ່ຽວກັບການຮ້ອງຟ້ອງ-ຮ້ອງທຸກຂອງລູກຄ້າ ເພື່ອສະເໜີຕໍ່ສະພາບໍລິຫານແກ້ໄຂ;
6. ຕິດຕາມກວດກາຄວາມຄືບໜ້າຂອງຄະນະອຳນວຍການ ກ່ຽວກັບການແກ້ໄຂຂໍ້ຄົງຄ້າງ ທີ່ກຳນົດໃນບົດລາຍງານການກວດສອບ ແລະ ແຈ້ງການຂອງ ສຄຄຊ;
7. ຕິດຕໍ່ ຫຼື ປະສານງານກັບ ສຄຄຊ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງສະພາບໍລິຫານ.

**ມາດຕາ 27 ຜູ້ອຳນວຍການ**

ຜູ້ອຳນວຍການ ແມ່ນຜູ້ບໍລິຫານຈັດການວຽກງານປະຈຳວັນຂອງບໍລິສັດບໍລິຫານຊັບສິນ ໃນຂອບເຂດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 29 ຂອງຂໍ້ຕົກລົງສະບັບນີ້ ແລະ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຜູ້ອຳນວຍການ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍສະພາບໍລິຫານ, ມີອາຍຸການ ສອງປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

ຜູ້ອຳນວຍການ ຕ້ອງເປັນສະມາຊິກສະພາບໍລິຫານ ແຕ່ບໍ່ໃຫ້ດຳລົງຕຳແໜ່ງເປັນ ປະທານ ຫຼື ຮອງປະທານ ສະພາບໍລິຫານໃນເວລາດຽວກັນ.

**ມາດຕາ 28 ເງື່ອນໄຂຂອງຜູ້ອຳນວຍການ**

ຜູ້ອຳນວຍການ ຂອງບໍລິສັດບໍລິຫານຊັບສິນ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 23 ຂອງຂໍ້ຕົກລົງສະບັບນີ້. ນອກຈາກນັ້ນ, ຕ້ອງມີໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບປະເພດ ຜູ້ບໍລິຫານກອງທຶນເພື່ອການລົງທຶນ ທີ່ອອກໂດຍ ສຄຄຊ.

### ມາດຕາ 29 ສິດ ແລະ ໜ້າທີ່ຂອງຜູ້ອຳນວຍການ

ຜູ້ອຳນວຍການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ລະບຽບການເຄື່ອນໄຫວ ຂອງບໍລິສັດບໍລິຫານຊັບສິນ ເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາ;
2. ຄົ້ນຄວ້າກຳນົດທິດທາງແຜນການໃນການບໍລິຫານຈັດການ ບໍລິສັດບໍລິຫານຊັບສິນ ເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາ ກ່ອນສະເໜີຕໍ່ ກອງປະຊຸມຜູ້ຖືຮຸ້ນຮັບຮອງ;
3. ຈັດຕັ້ງປະຕິບັດລະບຽບວ່າດ້ວຍຄວາມໝັ້ນຄົງ ຂອງບໍລິສັດບໍລິຫານຊັບສິນ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ;
4. ສະຫຼຸບລາຍງານການເຄື່ອນໄຫວ ແລະ ສ້າງແຜນການດຳເນີນທຸລະກິດປະຈຳປີ ຂອງບໍລິສັດບໍລິຫານຊັບສິນ ເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາ ກ່ອນສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຮັບຮອງ;
5. ຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ກອງປະຊຸມສະພາບໍລິຫານ;
6. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ກົດລະບຽບ ແລະ ສັນຍາຮ່ວມທຶນ ຂອງບໍລິສັດບໍລິຫານຊັບສິນ ເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາ ກ່ອນສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຮັບຮອງ;
7. ລາຍງານສະພາບການເຄື່ອນໄຫວຂອງບໍລິສັດບໍລິຫານຊັບສິນ ທີ່ບໍ່ສອດຄ່ອງກັບລະບຽບກົດໝາຍທີ່ຕິດພັນກັບວຽກງານຫຼັກຊັບຕໍ່ ສະພາບໍລິຫານ ແລະ ສຄຄຊ ທັນທີ;
8. ຄົ້ນຄວ້າກຳນົດເບັ້ຍປະຊຸມຂອງກອງປະຊຸມສະພາບໍລິຫານ, ເງິນເດືອນ, ເງິນບຳເນັດ ແລະ ນະໂຍບາຍຕ່າງໆ ສຳລັບ ສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານ ເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາ ກ່ອນສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຮັບຮອງ;
9. ຄົ້ນຄວ້າການແບ່ງປັນ ລາຍຮັບ, ເງິນປັນຜົນ ແລະ ການສ້າງຄັງຕ່າງໆ ເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາ ກ່ອນສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຮັບຮອງ;
10. ຊີ້ແຈງ, ຕອບຄຳຖາມ ແລະ ໃຫ້ລາຍລະອຽດກ່ຽວກັບການເຄື່ອນໄຫວຂອງບໍລິສັດບໍລິຫານຊັບສິນ ຕໍ່ກອງປະຊຸມສະພາບໍລິຫານ;
11. ຮັບຜິດຊອບທຸກການເຄື່ອນໄຫວຂອງບໍລິສັດບໍລິຫານຊັບສິນ ລວມທັງ ຜົນເສຍຫາຍຂອງບໍລິສັດບໍລິຫານຊັບສິນ ແລະ ຂອງລູກຄ້າທີ່ເກີດຈາກຄວາມຜິດພາດຂອງຕົນ;
12. ເປັນຕົວແທນໃນການລົງລາຍເຊັນໃນສັນຍາ ແລະ ເອກະສານທາງການຂອງ ບໍລິສັດບໍລິຫານຊັບສິນ;
13. ບໍລິຫານວຽກງານປະຈຳວັນຂອງບໍລິສັດບໍລິຫານຊັບສິນ ໃນຂອບເຂດສິດ ແລະ ໜ້າທີ່ ຂອງຕົນຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງບໍລິສັດ ຫຼື ຕາມການມອບໝາຍຂອງສະພາບໍລິຫານ;
14. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງຮອງຜູ້ອຳນວຍການ ຕໍ່ສະພາບໍລິຫານພິຈາລະນາ;
15. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຄະນະພະແນກ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ບັນຈຸສັບຊ້ອນພະນັກງານຂອງບໍລິສັດບໍລິຫານຊັບສິນ;
16. ຄົ້ນຄວ້າ ການຄວບທຸລະກິດ, ການສ້າງຕັ້ງບໍລິສັດໃນກຸ່ມ, ການລົງທຶນ, ການຂາຍຊັບສິນ ຫຼື ການຍຸບເລີກບໍລິສັດບໍລິຫານຊັບສິນ ຕໍ່ກອງປະຊຸມສະພາບໍລິຫານພິຈາລະນາ;
17. ຕົກລົງກ່ຽວກັບການປະຕິບັດນະໂຍບາຍຍ້ອງຍໍ ຫຼື ລົງວິໄນຕໍ່ພະນັກງານ ຕາມລະບຽບກົດໝາຍ;

18. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະ ເອກະສານ ພ້ອມທັງຊີ້ແຈງບັນຫາ ຕໍ່ຄະນະກຳມະການກວດກາພາຍໃນ, ຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ, ບໍລິສັດກວດສອບ, ຄະນະກວດກາ, ເຈົ້າໜ້າທີ່ສືບສວນ-ສອບສວນຫຼັກຊັບ ແລະ ບຸກຄົນທີ່ກ່ຽວຂ້ອງ;
19. ລາຍງານການເຄື່ອນໄຫວຂອງບໍລິສັດບໍລິຫານຊັບສິນ ຕໍ່ ສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ;
20. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 4
## ລະບອບບັນຊີ, ການລາຍງານ, ການເປີດເຜີຍຂໍ້ມູນ, ການເກັບຮັກສາຂໍ້ມູນ ແລະ ຂໍ້ຫ້າມ

### ມາດຕາ 30 ລະບອບບັນຊີ

ບໍລິສັດບໍລິຫານຊັບສິນ ຕ້ອງປະຕິບັດຫຼັກການຂອງການບັນຊີ, ມາດຕະຖານການບັນຊີ ໃຫ້ສອດຄ່ອງກັບ ກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບການທີ່ກ່ຽວຂ້ອງ.

ເອກະສານລາຍງານການເງິນປະຈຳປີ ຂອງບໍລິສັດບໍລິຫານຊັບສິນ ຕ້ອງຜ່ານການກວດສອບຈາກບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສຄຄຊ.

### ມາດຕາ 31 ການລາຍງານ

ບໍລິສັດບໍລິຫານຊັບສິນ ຕ້ອງປະຕິບັດລະບອບການລາຍງານຂໍ້ມູນ ຕາມການກຳນົດຂອງ ສຄຄຊ. ການລາຍງານ ຕ້ອງຮັບປະກັນຄວາມ ຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ.

ເນື້ອໃນທີ່ຕ້ອງໄດ້ລາຍງານ ປະກອບມີ ດັ່ງນີ້:

1. **ການລາຍງານປົກກະຕິ:**
   - 1.1 ບົດລາຍງານກ່ຽວກັບ ການເຄື່ອນໄຫວທຸລະກິດ ປະຈຳເດືອນ, ໄຕມາດ ແລະ ປະຈຳປີ;
   - 1.2 ບົດລາຍງານກ່ຽວກັບ ການບໍລິຫານການລົງທຶນຂອງກອງທຶນຮ່ວມ ປະຈຳເດືອນ, ໄຕມາດ ແລະ ປະຈຳປີ;
   - 1.3 ເອກະສານລາຍງານການເງິນ ປະຈຳເດືອນ, ໄຕມາດ ແລະ ປະຈຳປີ;
   - 1.4 ບົດລາຍງານກ່ຽວກັບ ການຄິດໄລ່ຊັບສິນສຸດທິຂອງກອງທຶນຮ່ວມ ປະຈຳວັນ;
   - 1.5 ເນື້ອໃນອື່ນ ຕາມການຮຽກຮ້ອງຂອງ ສຄຄຊ.
2. **ການລາຍງານກະທັນຫັນ:**
   - 2.1 ການປ່ຽນແປງຂອງ ສະພາບໍລິຫານ, ສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ຜູ້ບໍລິຫານກອງທຶນຮ່ວມ;
   - 2.2 ການປັບປຸງສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ ແລະ ໜັງສືຊວນຊື້ຂອງກອງທຶນຮ່ວມ;
   - 2.3 ການປ່ຽນແປງອັດຕາສ່ວນການຖືຮຸ້ນຂອງຂາຮຸ້ນ;
   - 2.4 ເນື້ອໃນອື່ນ ຕາມການຮຽກຮ້ອງຂອງ ສຄຄຊ.

**ມາດຕາ 32 ການເປີດເຜີຍຂໍ້ມູນ**

ບໍລິສັດບໍລິຫານຊັບສິນ ຕ້ອງປະຕິບັດລະບອບການເປີດເຜີຍຂໍ້ມູນ ຕາມການກໍານົດຂອງ ສຄຄຊ. ການເປີດເຜີຍຂໍ້ມູນ ຕ້ອງຮັບປະກັນຄວາມ ຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ.

ເນື້ອໃນທີ່ຕ້ອງໄດ້ເປີດເຜີຍ ປະກອບມີ ດັ່ງນີ້:

1. **ການເປີດເຜີຍປົກກະຕິ:**
   - 1.1 ເອກະສານລາຍງານການເງິນຂອງ ກອງທຶນຮ່ວມໃນແຕ່ລະກອງ ທີ່ຕົນສ້າງ ແລະ ບໍລິຫານ ປະຈໍາໄຕມາດ, ຫົກເດືອນຕົ້ນປີ ແລະ ປະຈໍາປີ;
   - 1.2 ບົດລາຍງານກ່ຽວກັບ ການຄິດໄລ່ຊັບສິນສຸດທິຂອງກອງທຶນຮ່ວມ ປະຈໍາວັນ;
   - 1.3 ເນື້ອໃນອື່ນ ຕາມການຮຽກຮ້ອງຂອງ ສຄຄຊ.
2. **ການເປີດເຜີຍກະທັນຫັນ:**
   - 2.1 ການເພີ່ມ ແລະ ຫຼຸດທຶນຈົດທະບຽນ;
   - 2.2 ການຫຼຸດລົງຂອງຊັບສິນທັງໝົດຂອງ ບໍລິສັດບໍລິຫານຊັບສິນ ນັບແຕ່ ສິບສ່ວນຮ້ອຍ ຂຶ້ນໄປ;
   - 2.3 ເນື້ອໃນອື່ນ ຕາມການຮຽກຮ້ອງຂອງ ສຄຄຊ.

**ມາດຕາ 33 ການເກັບຮັກສາຂໍ້ມູນ**

ບໍລິສັດບໍລິຫານຊັບສິນ ຕ້ອງເກັບຮັກສາຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງກັບການເຄື່ອນໄຫວທຸລະກິດຂອງຕົນ ຢ່າງໜ້ອຍ ສິບປີ ນັບແຕ່ວັນທີ່ມີການດໍາເນີນທຸລະກໍາ ເປັນຕົ້ນໄປ.

**ມາດຕາ 34 ຂໍ້ຫ້າມສໍາລັບບໍລິສັດບໍລິຫານຊັບສິນ**

ຫ້າມ ບໍລິສັດບໍລິຫານຊັບສິນ ລວມທັງ ສະມາຊິກສະພາບໍລິຫານ ແລະ ຄະນະອໍານວຍການ ມີພຶດຕິກໍາໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 138. ນອກນັ້ນ ຍັງມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ເຄື່ອນໄຫວທຸລະກິດເກີນຂອບເຂດທີ່ໄດ້ຮັບອະນຸຍາດ;
2. ຂາຍໜ່ວຍລົງທຶນຂອງກອງທຶນຮ່ວມ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຄຄຊ;
3. ພຶດຕິກໍາອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 35 ນະໂຍບາຍຕໍ່ຜູ້ມີຜົນງານ**

ບໍລິສັດບໍລິຫານຊັບສິນ ລວມທັງສະມາຊິກສະພາບໍລິຫານ, ຄະນະອໍານວຍການ, ຄະນະພະແນກ, ນັກວິຊາຊີບທຸລະກິດຫຼັກຊັບ, ພະນັກງານ ຂອງຫົວໜ່ວຍດັ່ງກ່າວ, ບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການ ເຄື່ອນໄຫວທຸລະກິດຂອງ ບໍລິສັດບໍລິຫານຊັບສິນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

ມາດຕາ 36 ມາດຕະການຕໍ່ຜູ້ລະເມີດ

ບໍລິສັດບໍລິຫານຊັບສິນ, ສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ຜູ້ບໍລິຫານກອງທຶນຮ່ວມ ຂອງບໍລິສັດບໍລິຫານຊັບສິນ ລວມທັງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ ກອງທຶນ, ຜູ້ຖືໜ່ວຍລົງທຶນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ໂຈະ, ຍົກເລີກໃບອະນຸຍາດດຳເນີນທຸລະກິດ ຫຼື ໃບອະນຸຍາດຕ່າງໆ ທີ່ ສຄຄຊ ອອກໃຫ້, ປັບໃໝ, ໃຊ້ແທນຄ່າເສັຍຫາຍ ທາງແພ່ງ ຫຼື ຮັບຜິດຊອບທາງອາຍາ ຕາມກໍລະນີເບົາ ຫຼື ໜັກ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

ນອກຈາກມາດຕະການປັບໃໝຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 168 ຂໍ້ 6 ຜູ້ລະເມີດ ຍັງຈະຖືກປະຕິບັດມາດຕະການປັບໃໝເພີ່ມເຕີມ ດັ່ງນີ້:

1. ເຄື່ອນໄຫວທຸລະກິດເກີນຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 20.000.000 ກີບ;
2. ຂາຍໜ່ວຍລົງທຶນ ຂອງກອງທຶນຮ່ວມ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ສຄຄຊ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 80.000.000 ກີບ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

ມາດຕາ 37 ການຈັດຕັ້ງປະຕິບັດ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດບໍລິຫານຊັບສິນ, ຜູ້ບໍລິຫານກອງທຶນຮ່ວມ, ສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ຄະນະພະແນກ, ນັກວິຊາຊີບທຸລະກິດຫຼັກຊັບ, ພະນັກງານຂອງທົ່ວໜ່ວຍດັ່ງກ່າວ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

ມາດຕາ 38 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ ປະທານ

ສົມດີ ດວງດີ